ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 1177/ກຄສງ

ນະຄອນຫຼວງວຽງຈັນ, ວັນທີ 10 SEP 2013

# ແຈ້ງການ

**ເຖິງ:** ຜູ້ອຳນວຍການ ບໍລິສັດໃຫ້ເຊົ່າສິນເຊື່ອ.

**ເລື່ອງ:** ໃຫ້ສົ່ງລາຍງານການເຄື່ອນໄຫວທຸກໆເດືອນໃຫ້ ທະນາຄານແຫ່ງ ສປປ ລາວ.

- ອີງຕາມ ດຳລັດ ວ່າດ້ວຍການເຊົ່າສິນເຊື່ອ ສະບັບເລກທີ 11/ນຍ ລົງວັນທີ 18 ກຸມພາ 1999.
- ອີງຕາມ ກອງປະຊຸມອົບຮົມການນຳໃຊ້ແບບຟອມເຊົ່າສິນເຊື່ອ ຄັ້ງວັນທີ 26 ກໍລະກົດ 2013.
- ອີງຕາມ ທິດຊີ້ນຳຂອງ ຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 13 ສິງຫາ 2013.

ທະນາຄານແຫ່ງ ສປປ ລາວ ກົມຄຸ້ມຄອງສະຖາບັນການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ໄລຍະຜ່ານມາກົມຄຸ້ມຄອງສະຖາບັນການເງິນ ໄດ້ສຳເລັດການເຜີຍແຜ່ແບບຟອມລາຍງານຂອງບໍລິສັດໃຫ້ເຊົ່າສິນເຊື່ອ ແລະ ໄດ້ສ້າງຄວາມເຂົ້າໃຈອະທິບາຍແບບຟອມການລາຍງານ ໃຫ້ແກ່ບັນດາບໍລິສັດໃຫ້ເຊົ່າສິນເຊື່ອ ໃນກອງປະຊຸມຄັ້ງວັນທີ 26 ກໍລະກົດ 2013. ເພື່ອເຮັດໃຫ້ການດຳເນີນທຸລະກິດເຊົ່າສິນເຊື່ອ ເປັນລະບົບ, ມີຄວາມເຂັ້ມແຂງ ຍືນຍົງ. ສະນັ້ນ, ບໍລິສັດໃຫ້ເຊົ່າສິນເຊື່ອ ທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດໃຫ້ເຊົ່າສິນເຊື່ອ ສະບັບຖາວອນ ແຕ່ 3 ເດືອນຂຶ້ນໄປ ຕ້ອງສົ່ງບົດລາຍງານການເຄື່ອນໄຫວທຸລະກິດເຊົ່າສິນເຊື່ອ ເປັນປະຈຳທຸກໆເດືອນ ຊ້າສຸດບໍ່ໃຫ້ກາຍ ວັນທີ 15 ຂອງເດືອນຖັດໄປ ໃຫ້ ທະນາຄານ ແຫ່ງ ສປປ ລາວ ນັບຕັ້ງແຕ່ເດືອນ ກັນຍາ 2013 ເປັນຕົ້ນໄປ (ຕາມແບບຟອມລາຍງານໄດ້ຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ດ້ວຍຄວາມນັບຖືຢ່າງສູງ

**ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ**

ທະນາຄານ ແຫ່ງ ສປປ ລາວ ກົມຄຸ້ມຄອງສະຖາບັນການເງິນ

ດຣ. ອາຄົມ ປຣະເສີດ

ບ່ອນສົ່ງ:

1. ບໍລິສັດໃຫ້ເຊົ່າສິນເຊື່ອ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດໃຫ້ເຊົ່າສິນເຊື່ອຖາວອນແຕ່ 3 ເດືອນຂຶ້ນໄປ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ.